# ບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມືດ້ານແຮງງານ
# ລະຫວ່າງ
# ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
# ແລະ
# ລັດຖະບານ ແຫ່ງ ຣາຊະອານາຈັກໄທ

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໂດຍກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ລັດຖະບານແຫ່ງ ຣາຊະອານາຈັກໄທ ໂດຍກະຊວງແຮງງານ (ຊຶ່ງຕໍ່ໄປນີ້ຈະເອີ້ນຮ່ວມກັນວ່າ "ຄູ່ພາຄີ" ແລະ ເອີ້ນແຕ່ລະຝ່າຍວ່າ "ພາຄີ").

ດ້ວຍສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ຣາຊະອານາຈັກໄທ ເພື່ອຜົນປະໂຫຍດຂອງແຕ່ລະປະເທດ ບົນພື້ນຖານແຫ່ງຫລັກການສະເໝີພາບ ຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະ ເຄົາລົບເອກະລາດອະທິປະໄຕຂອງກັນ ແລະ ກັນ.

ໂດຍປາດຖະໜາທີ່ຈະເສີມຂະຫຍາຍຄວາມສຳພັນທີ່ພົ້ນເດັ່ນ ລະຫວ່າງ ຄູ່ພາຄີ ແລະ ຜົນປະໂຫຍດຂອງຄູ່ພາຄີ ໃນການສ້າງຄວາມເຂັ້ມແຂງໃນຄວາມຈະເລີນເຕີບໂຕທາງດ້ານເສດຖະກິດ ລວມທັງການສະໜັບສະໜູນ ແລະ ການພັດທະນາການຮ່ວມມື ລະຫວ່າງ ຄູ່ພາຄີ ໃນດ້ານແຮງງານ.

ບົນພື້ນຖານແຫ່ງການຈັດຕັ້ງປະຕິບັດຕາມບົດບັນທຶກຄວາມເຂົ້າໃຈ ລະຫວ່າງ ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານແຫ່ງ ຣາຊະອານາຈັກໄທ ວ່າດ້ວຍການຮ່ວມມືດ້ານການຈ້າງແຮງງານທີ່ໄດ້ລົງນາມຮ່ວມກັນໃນວັນທີ 18 ຕຸລາ 2002.

ເພື່ອສົ່ງເສີມການຮ່ວມມືດ້ານແຮງງານ ລະຫວ່າງ ຄູ່ພາຄີ ໃຫ້ມີການພັດທະນາທີ່ດີຂຶ້ນ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການທາງດ້ານແຮງງານ ໃນການພັດທະນາເສດຖະກິດ-ສັງຄົມ, ເພີ່ມທະວີການປົກປ້ອງສິດ ແລະ ຜົນປະໂຫຍດ ຂອງຜູ້ອອກແຮງງານ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຂອງແຕ່ລະປະເທດ.

**ຄູ່ພາຄີ ໄດ້ຕົກລົງກັນດັ່ງຕໍ່ໄປນີ້:**

## ຂໍ້ 1
## ຈຸດປະສົງ

ບົດບັນທຶກຄວາມເຂົ້າໃຈສະບັບນີ້ ມີຈຸດປະສົງ ເພື່ອກຳນົດຫຼັກການພື້ນຖານ ກ່ຽວກັບການຮ່ວມມືດ້ານແຮງງານ ເຊັ່ນ: ການພັດທະນາສີມືແຮງງານ, ການຈ້າງງານ, ການຄຸ້ມຄອງແຮງງານ, ການປະກັນສັງຄົມ, ການປ້ອງກັນບັນຫາການຄ້າມະນຸດດ້ານແຮງງານ, ການຮ່ວມມືດ້ານວິຊາການ ແລະ ການຮ່ວມມືດ້ານອື່ນໆ.

## ຂໍ້ 2

## ອົງການທີ່ຖືກມອບສິດ

ເພື່ອໃຫ້ບັນລຸຕາມຈຸດປະສົງຂອງບົດບັນທຶກຄວາມເຂົ້າໃຈສະບັບນີ້ ອົງການທີ່ຖືກມອບສິດໃຫ້ດຳເນີນການ ຄື:

1). ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃນນາມລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;

2). ກະຊວງແຮງງານ ໃນນາມລັດຖະບານແຫ່ງ ຣາຊະອານາຈັກໄທ.

## ຂໍ້ 3

## ການຮ່ວມມືທາງດ້ານວິຊາການ

ຄູ່ພາຄີ ຕ້ອງເຮັດວຽກຮ່ວມກັນຢ່າງໃກ້ຊິດ ເພື່ອສະໜັບສະໜູນການຮ່ວມມືທາງດ້ານວິຊາການ ລະຫວ່າງ ສອງປະເທດ ໃນດ້ານແຮງງານ ດັ່ງນີ້:

1). ແລກປ່ຽນຄວາມຮູ້ກ່ຽວກັບລະບົບໂຄງການ, ການສຶກສາ, ງານວິໄຈ, ຄວາມຊ່ຽວຊານ ແລະ ຂໍ້ມູນ ໃນດ້ານຕ່າງໆ ລວມທັງ (ແຕ່ບໍ່ຈຳກັດສະເພາະ) ກົດໝາຍການຈ້າງງານ ແລະ ແຮງງານ ແລະ ການບໍລິຫານ (ເຊັ່ນ: ການຮ່ວມເຈລະຈາຕໍ່ລອງ, ການຮ້ອງທຸກ ແລະ ການບັງຄັບໃຊ້ກົດໝາຍ, ການແກ້ໄຂບັນຫາຂໍ້ຂັດແຍ່ງແຮງງານ, ການປະກັນສັງຄົມ ແລະ ການຄຸ້ມຄອງແຮງງານ, ການຟື້ນຟູສະມັດຕະພາບ, ເສລີພາບໃນການລວມຕົວຕາມກົດໝາຍ, ຄວາມປອດໄພດ້ານແຮງງານ ແລະ ອາຊີວະອະນາໄມ, ການເຮັດວຽກໃນເຮືອເດີນທະເລ ການປະກັນການວ່າງງານ ແລະ ການບໍລິຫານຈັດການແຮງງານຕ່າງດ້າວ) ແລະ ການເພີ່ມຜະລິດຕະພາບແຮງງານ;

2). ສະໜັບສະໜູນການແລກປ່ຽນການຢ້ຽມຢາມ ລະຫວ່າງ ບຸກຄະລາກອນທີ່ກ່ຽວຂ້ອງ ແລະ ຜູ້ຊ່ຽວຊານ;

3). ແລກປ່ຽນຂໍ້ມູນຂ່າວສານ ເພື່ອປ້ອງກັນການຈ້າງແຮງງານຜິດກົດໝາຍ ແລະ ການຄ້າມະນຸດ ເພື່ອການຈ້າງງານ;

4). ການຮ່ວມມືອື່ນໆ ດ້ານແຮງງານ ຕາມການເຫັນດີຂອງຄູ່ພາຄີ.

## ຂໍ້ 4

## ການຮ່ວມມືດ້ານການພັດທະນາສີມືແຮງງານ

ຄູ່ພາຄີ ຮ່ວມມືກັນ ເພື່ອພັດທະນາທັກສະສີມືແຮງງານ ແລະ ແລກປ່ຽນຂໍ້ມູນຂ່າວສານກ່ຽວກັບການພັດທະນາສີມືແຮງງານ, ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ບໍລິຫານດ້ານການພັດທະນາທັກສະສີມືແຮງງານ, ຄູຝຶກ ແລະ ພະນັກງານວິຊາການດ້ານການພັດທະນາສີມືແຮງງານ ເພື່ອຍົກລະດັບທັກສະສີມືແຮງງານ ແລະ ເພີ່ມຜະລິດຕະພາບແຮງງານ.

## ຂໍ້ 5

## ການຮ່ວມມືດ້ານການຈ້າງງານ

ຄູ່ພາຄີ ສົ່ງເສີມໃຫ້ມີການຈ້າງງານຊຶ່ງກັນ ແລະ ກັນ ບົນພື້ນຖານຄວາມຕ້ອງການແຮງງານໃນການພັດທະນາເສດຖະກິດ-ສັງຄົມ ຂອງປະເທດຄູ່ພາຄີ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ

ປະເທດຄູ່ພາຄີ. ສໍາລັບລາຍລະອຽດຂອງການຮ່ວມມືດ້ານການຈ້າງງານ ພາຍໃຕ້ບົດບັນທຶກຄວາມເຂົ້າໃຈສະບັບນີ້ ຕ້ອງໄດ້ກໍານົດໄວ້ໃນ "ຂໍ້ຕົກລົງວ່າດ້ວຍການຈ້າງແຮງງານ" ລະຫວ່າງຄູ່ພາຄີຕໍ່ໄປ.

## ຂໍ້ 6
## ການຮ່ວມມືດ້ານການຄຸ້ມຄອງແຮງງານ

ຄູ່ພາຄີ ສົ່ງເສີມໃຫ້ມີການຄຸ້ມຄອງແຮງງານຂອງປະເທດຄູ່ພາຄີ ພາຍໃຕ້ບົດບັນທຶກຄວາມເຂົ້າໃຈສະບັບນີ້ ຜູ້ອອກແຮງງານຈະໄດ້ຮັບການປະຕິບັດຢ່າງເທົ່າທຽມກັນ ໂດຍບໍ່ຈໍາແນກໃຫ້ເປັນໄປຕາມກົດໝາຍ ແລະ ລະບຽບການຂອງປະເທດຜູ້ຮັບ.

## ຂໍ້ 7
## ການຮ່ວມມືດ້ານການປະກັນສັງຄົມ

ຄູ່ພາຄີ ຮ່ວມມືກັນໃນການພັດທະນາວຽກງານປະກັນສັງຄົມ, ການແລກປ່ຽນດ້ານວິຊາການ, ຂໍ້ມູນຂ່າວສານ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ບໍລິຫານຂອງປະເທດຄູ່ພາຄີ ດ້ານການປະກັນສັງຄົມ ລວມເຖິງການຊຸກຍູ້ໃຫ້ຜູ້ອອກແຮງງານທີ່ເຂົ້າໄປເຮັດວຽກໃນປະເທດຄູ່ພາຄີ ເຂົ້າສູ່ລະບົບປະກັນສັງຄົມ ແລະ ໄດ້ຮັບການຄຸ້ມຄອງຕາມກົດໝາຍຂອງປະເທດຜູ້ຮັບ.

## ຂໍ້ 8
## ການປະສານງານ

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດບົດບັນທຶກຄວາມເຂົ້າໃຈມີປະສິດທິພາບ ແລະ ຖືກຕ້ອງຕາມລະບຽບກົດໝາຍ ຄູ່ພາຄີ ຕ້ອງແຕ່ງຕັ້ງພະນັກງານປະສານງານຂອງແຕ່ລະຝ່າຍ ເພື່ອປຶກສາຫາລື ສຶກສາວິໄຈ ຊ່ວຍເຫຼືອປະສານງານ, ຕິດຕາມ ດູແລ ແລະ ໃຫ້ຄໍາປຶກສາ ກ່ຽວກັບຂະບວນການຈັດສົ່ງ ແລະ ຮັບແຮງງານ ໂດຍຄູ່ພາຄີຈະອໍານວຍຄວາມສະດວກໃນການປະຕິບັດພາລະກິດໃຫ້ກັບພະນັກງານເຫຼົ່ານັ້ນ.

## ຂໍ້ 9
## ການຈັດຕັ້ງປະຕິບັດ

1). ຄູ່ພາຄີ ຮ່ວມກັນຈັດຕັ້ງປະຕິບັດແຜນງານຕາມບົດບັນທຶກຄວາມເຂົ້າໃຈສະບັບນີ້;

2). ແຕ່ລະໜ່ວຍງານທີ່ມີອໍານາດຂອງຄູ່ພາຄີ ຈະແຕ່ງຕັ້ງເຈົ້າໜ້າທີ່ລະດັບອາວຸໂສເຮັດໜ້າທີ່ເປັນຜູ້ປະສານງານຫຼັກ ໃນການດໍາເນີນການຕາມບົດບັນທຶກຄວາມເຂົ້າໃຈສະບັບນີ້ ເພື່ອອໍານວຍຄວາມສະດວກໃນການສື່ສານ ລະຫວ່າງ ຄູ່ພາຄີ ຕາມບົດບັນທຶກຄວາມເຂົ້າໃຈສະບັບນີ້;

3). ຄູ່ພາຄີ ດໍາເນີນການຈັດກອງປະຊຸມ ເພື່ອຕິດຕາມການປະຕິບັດຕາມບົດບັນທຶກຄວາມເຂົ້າໃຈ ສະບັບນີ້ ເປັນແຕ່ລະໄລຍະຕາມຄວາມເໝາະສົມ ສໍາລັບກອງປະຊຸມລະດັບເຈົ້າໜ້າທີ່ອາວຸໂສ ຈະຈັດປີລະໜຶ່ງຄັ້ງ ແລະ ກອງປະຊຸມລະດັບລັດຖະມົນຕີ ຈະຈັດສອງປີຕໍ່ຄັ້ງ ໂດຍໝູນວຽນກັນເປັນເຈົ້າພາບ.

## ຂໍ້ 10
## ການແກ້ໄຂຂໍ້ຂັດແຍ່ງ

ຂໍ້ຂັດແຍ່ງທີ່ເກີດຂຶ້ນຈາກການຕີຄວາມໝາຍ ຫຼື ການຈັດຕັ້ງປະຕິບັດຕາມບົດບັນທຶກຄວາມເຂົ້າໃຈສະບັບນີ້ ແລະ ຂໍ້ຕົກລົງທີ່ກ່ຽວຂ້ອງ ໃຫ້ແກ້ໄຂແບບມິດຕະພາບ ໂດຍຜ່ານການປຶກສາຫາລື ແລະ/ຫຼື ການເຈລະຈາ ລະຫວ່າງ ຄູ່ພາຄີ ບົນພື້ນຖານຫລັກການສະເໝີພາບ ແລະ ຕ່າງຝ່າຍຕ່າງມີຜົນປະໂຫຍດຮ່ວມກັນ.

## ຂໍ້ 11
## ການແກ້ໄຂ

ບົດບັນທຶກຄວາມເຂົ້າໃຈສະບັບນີ້ ອາດຈະຖືກແກ້ໄຂ ຫຼື ປ່ຽນແປງ ໂດຍການເຫັນດີຮ່ວມກັນຂອງຄູ່ພາຄີ ເປັນລາຍລັກອັກສອນ ໂດຍຜ່ານຊ່ອງທາງການທູດ ແລະ ຈະມີຜົນບັງຄັບໃຊ້ນັບແຕ່ວັນຄູ່ພາຄີເຫັນດີຮ່ວມກັນ.

## ຂໍ້ 12
## ການມີຜົນບັງຄັບໃຊ້ ແລະ ການສິ້ນສຸດ

1). ບົດບັນທຶກຄວາມເຂົ້າໃຈສະບັບນີ້ ມີຜົນບັງຄັບໃຊ້ ນັບແຕ່ວັນທີ່ໄດ້ລົງນາມໂດຍຄູ່ພາຄີ;

2). ບົດບັນທຶກຄວາມເຂົ້າໃຈສະບັບນີ້ ມີຜົນບັງຄັບໃຊ້ເປັນໄລຍະເວລາ ຫ້າ (5) ປີ ໃນກໍລະນີທີ່ພາຄີຝ່າຍໃດຝ່າຍໜຶ່ງ ບໍ່ແຈ້ງການແກ້ໄຂເປັນລາຍລັກອັກສອນ ໃຫ້ຕໍ່ອາຍຸຂອງບົດບັນທຶກຄວາມເຂົ້າໃຈໄປອີກທຸກສອງ (2) ປີ;

3). ໃນກໍລະນີຄູ່ພາຄີ ມີຈຸດປະສົງຢາກຍົກເລີກບົດບັນທຶກຄວາມເຂົ້າໃຈສະບັບນີ້ກ່ອນກໍານົດ ຈະຕ້ອງແຈ້ງໃຫ້ພາຄີອີກຝ່າຍໜຶ່ງຊາບກ່ອນລ່ວງໜ້າ ຫົກສິບ (60) ວັນ ເປັນລາຍລັກອັກສອນ ໂດຍຜ່ານຊ່ອງທາງການທູດ;

4). ບົດບັນທຶກຄວາມເຂົ້າໃຈສະບັບນີ້ ປ່ຽນແທນບົດບັນທຶກຄວາມເຂົ້າໃຈ ລະຫວ່າງ ລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານແຫ່ງ ຣາຊະອານາຈັກໄທ ວ່າດ້ວຍການຮ່ວມມືດ້ານການຈ້າງງານ, ສະບັບລົງວັນທີ 18 ຕຸລາ 2002. ບັນດາສັນຍາກ່ຽວກັບການຈ້າງງານ ທີ່ໄດ້ລົງນາມຮ່ວມກັນພາຍໃຕ້ບົດບັນທຶກຄວາມເຂົ້າໃຈສະບັບປີ 2002 ຍັງສາມາດນໍາໃຊ້ໄດ້ຈົນຄົບກໍານົດ ຍົກເວັ້ນໃນກໍລະນີຄູ່ພາຄີ ຕົກລົງກັນເປັນຢ່າງອື່ນ;

5). ກໍລະນີ ບົດບັນທຶກຄວາມເຂົ້າໃຈສະບັບນີ້ ຫາກຖືກຍົກເລີກ ບັນດາສັນຍາກ່ຽວກັບການຈ້າງງານ ທີ່ໄດ້ລົງນາມຮ່ວມກັນ ພາຍໃຕ້ບົດບັນທຶກຄວາມເຂົ້າໃຈສະບັບນີ້ ຍັງສາມາດນໍາໃຊ້ໄດ້ຈົນຄົບກໍານົດ ຍົກເວັ້ນໃນກໍລະນີ ຄູ່ພາຄີຕົກ ລົງເປັນຢ່າງອື່ນ.

6). ການຍົກເລີກບົດບັນທຶກຄວາມເຂົ້າໃຈສະບັບນີ້ ຈະບໍ່ສົ່ງຜົນກະທົບຕໍ່ການຈັດຕັ້ງປະຕິບັດ ແລະໄລຍະເວລາຂອງແຜນປະຕິບັດງານ, ໂຄງການ, ແຜນງານຕ່າງໆ ທີ່ດໍາເນີນການພາຍໃຕ້ບົດບັນທຶກຄວາມເຂົ້າໃຈສະບັບນີ້ ຈົນກວ່າແຜນປະຕິບັດງານ, ໂຄງການ ແລະ ແຜນງານ ເຫຼົ່ານັ້ນ ຖືກຈັດຕັ້ງປະຕິບັດຈົນສໍາເລັດ.

ເພື່ອຄວາມເຂົ້າໃຈກົງກັນຂອງຄູ່ພາຄີ ໄດ້ມີເອກະສານຊ້ອນທ້າຍບົດບັນທຶກຄວາມເຂົ້າໃຈສະບັບນີ້ ເພື່ອປຽບທຽບຄໍາສັບທີ່ນໍາໃຊ້ໃນບົດບັນທຶກຄວາມເຂົ້າໃຈສະບັບນີ້.

ເພື່ອເປັນຫລັກຖານ, ຜູ້ຕາງໜ້າທີ່ໄດ້ຮັບການມອບໝາຍສິດອຳນາດຢ່າງຖືກຕ້ອງຈາກລັດຖະບານຂອງຕົນ ຈຶ່ງໄດ້ລົງນາມບົດບັນທຶກຄວາມເຂົ້າໃຈສະບັບນີ້.

ບົດບັນທຶກຄວາມເຂົ້າໃຈສະບັບນີ້ ເຮັດທີ່ ກຸງເທບມະຫານະຄອນ, ໃນວັນທີ 06 ກໍລະກົດ 2016 ເປັນ ສອງ (2) ສະບັບ ພາສາລາວ ແລະ ພາສາໄທ, ທັງສອງພາສາມີຄຸນຄ່າເທົ່າທຽມກັນ.

| | |
|---|---|
| ຕາງໜ້າ ລັດຖະບານແຫ່ງ<br>ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ | ຕາງໜ້າລັດຖະບານແຫ່ງ<br>ຣາຊະອານະຈັກໄທ |
| ຄຳແພງ ໄຊສົມແພງ<br>**ລັດຖະມົນຕີ**<br>**ກະຊວງແຮງງານ ແລະ ສະຫວັດດີການສັງຄົມ** | ພົນເອກ ສິຣິໄຊ ດິດຖະກຸນ<br>**ລັດຖະມົນຕີວ່າການ ກະຊວງແຮງງານ** |

## ເອກະສານຊ້ອນທ້າຍບົດບັນທຶກຄວາມເຂົ້າໃຈ
## ປຽບທຽບຄຳສັບທີ່ໃຊ້ໃນບົດບັນທຶກຄວາມເຂົ້າໃຈ

| ລ/ດ | ພາສາລາວ | ພາສາໄທ |
|---|---|---|
| 1 | ອົງການທີ່ຖືກມອບສິດ | ໜ່ວຍງານທີ່ມີອຳນາດ |
| 2 | ອົງກອນ | ໜ່ວຍງານ |
| 3 | ພະນັກງານ | ເຈົ້າໜ້າທີ່ |
| 4 | ການຈັດຕັ້ງປະຕິບັດ | ການດຳເນີນງານ |
| 5 | ມິດຕະພາບ | ສັມມິດ |
| 6 | ການດັດແກ້ | ການປັບແກ້ |
| 7 | ການເຫັນດີ | ຄວາມເຫັນຊອບ |
| 8 | ເປັນເອກະພາບ | ເຫັນຊອບຮ່ວມກັນ |
| 9 | ການແກ້ໄຂຂໍ້ຂັດແຍ່ງ | ການລະງັບຂໍ້ຂັດແຍ່ງ |
| 10 | ຫລັກຖານ | ພະຍານ |
| 11 | ການຮ່ວມມື | ຄວາມຮ່ວມມື |